ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110
BANK OF THE LAO PDR



# ທະນາຄານແຫ່ງ ສປປ ລາວ ຮ່ວມຕັ້ງຊຸ້ມວາງສະແດງ ໃນງານວາງສະແດງ ກະສິກຳລາວ 2024








ໃນລະຫວ່າງວັນທີ 16-20 ທັນວາ 2024 ທີ່ ສູນການຄ້າລາວໄອເຕັກ (ຕຶກເກົ່າ) ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ເຂົ້າຮ່ວມຕັ້ງຊຸ້ມວາງສະແດງຜົນງານການເຄື່ອນໄຫວວຽກງານຂອງ ທະນາຄານແຫ່ງ ສປປ ລາວ ແລະ ບັນຍາຍວຽກງານວິຊາສະເພາະ 2 ຫົວຂໍ້ຄື: 1) ການຄຸ້ມຄອງລາຍຮັບເງິນຕາຕ່າງປະເທດຈາກການສົ່ງອອກສິນຄ້າ ແລະ ການບໍລິການ ແລະ 2) 2 ນະໂຍບາຍສິນເຊື່ອຂອງ ທຫລ (ນະໂຍບາຍສິນເຊື່ອເພື່ອກະຕຸ້ນເສດຖະກິດ ແລະ ນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ) ທີ່ງານວາງສະແດງກະສິກຳລາວ 2024 (1st Agri EXPO LAOS 2024) ທີ່ຈັດຂຶ້ນໂດຍກະຊວງກະສິກຳ ແລະ ປ່າໄມ້.

ຈຸດປະສົງແມ່ນເພື່ອເປັນການເຜີຍແຜ່ວຽກງານວິຊາສະເພາະທີ່ຕິດພັນກັບຂະແໜງທະນາຄານ ໃຫ້ມວນຊົນໄດ້ຮັບຊາບເປັນຕົ້ນແມ່ນ ປະຫວັດຄວາມເປັນມາເງິນກີບແຫ່ງຊາດລາວ, ນິຕິກຳຄຸ້ມຄອງຄວາມໝັ້ນຄົງຂອງສະຖາບັນການເງິນ, ນະໂຍບາຍສິນເຊື່ອຂອງ ທຫລ, ນິຕິກຳກ່ຽວກັບລະບົບການຊຳລະ ແລະ ການໃຫ້ບໍລິການຊຳລະ ແລະ ວຽກງານການຄຸ້ມຄອງເງິນຕາຕ່າງປະເທດ.











# ຂ່າວ: ອານຸດທິດາ ພິມສະຫວັດດີ.
# ພາບ: ໝີຈັນ ສີສະຫວັດ.

# ໃຊ້ເງິນກີບທົ່ວທັງຊາດສ້າງບົດບາດຄ່າເງິນກີບລາວ